# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 29 ກໍຣະກົດ 2007 ( 07-29-2007 )

## <u>ເຫັນດີກັບຫລັກການ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ກິຈການ 15:1-2, 4-5, 12-15, 23-29

**<u>ຄໍາຖາມແຫ່ງຊີວິດ:</u>** ພວກເຮົາຈະເຮັດແນວໃດ ໃນເມື່ອເກີດບໍ່ມີຄວາມເຫັນດີດ້ວຍກັນໃນໂບດ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການແກ້ໄຂຄວາມຂັດແຍ່ງໃນໂບດ ຕ້ອງຍອມຮັບຄວາມຈິງທີ່ສໍາຄັນໃນພຣະຄັມພີ ແລະບໍ່ມີຂໍ້ແມ້ໃດ ໆ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຂຽນຂື້ນມາເພື່ອຊ່ອຍທ່ານໃຫ້ເຮັດພາກສ່ວນຂອງທ່ານໃນໂບດຕາມພຣະປະສົງຂອງພຣະເຈົ້າໂດຍ:

- ຮູ້ຈັກຄວາມສໍາຄັນຂອງຄວາມເຊື່ອທີ່ໂບດຈະຕ້ອງເຫັນດີນໍາກັນແລະ
- ຕ້ອງອ່ານ ແລະສຶກສາພຣະຄັມພີເພື່ອຈະໄດ້ຍຶດໝັ້ນຢູ່ໃນຄວາມຈິງນັ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນໍາ:</u>** - ໃຫ້ເວລານັກຮຽນຄິດເຖິງເຣື່ອງການຂັດແຍ່ງກັນຈັກ 1 ນາທີ ແລະຈະແກ້ໄຂຢ່າງໃດ?

**<u>ຄໍາຖາມ:</u>**

1. ພວກເຮົາຈະເຮັດແນວໃດໃນເມື່ອພວກເຮົາບໍ່ເຫັນດີນໍາກັນຢູ່ໃນໂບດ?
   -ໃນບົດຮຽນມື້ນີ້ຈະຊ່ອຍໃຫ້ພວກເຮົາເຫັນວ່າ ພວກເຮົາຈະແກ້ໄຂຂໍ້ຂັດແຍ່ງທີ່ມີຢູ່ໃນໂບດໃນທາງພຣະຄັມພີ.

**1. <u>ຮັບຮູ້ວ່າມີການຂັດແຍ່ງ:</u>** ກິຈການ 15:1-2,4-5

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 15:1-2, 4-5

2) ບັນດາຜູ້ທີ່ເຊື່ອທັງຫລາຍຄວນຈະແກ້ໄຂບັນຫາການຂັດແຍ່ງກັນໃນໂບດດ້ວຍຫລັກການທາງພຣະຄັມພີ.

3) ທ່ານໂປໂລ ແລະທ່ານບາຣະນາບາຫາກໍກັບມາຈາກການໄປປະກາດຂ່າວປະເສີດ, ໄປກໍ່ຕັ້ງຄຣິສຕະຈັກໃນດິນແດນຂອງພວກຄົນຕ່າງຊາດຕາມເງື່ອນໄຂຂອງພຣະວິນຍານບໍຣິສຸດ ຜົນທີ່ໄດ້ຮັບຄື ມີຄົນຕ່າງຊາດໄດ້ປ່ຽນສາສນາດັ້ງເດີມທີ່ເຂົາມີຢູ່ນັ້ນເປັນຈໍານວນຫລວງຫລາຍ. ມີພວກຟາຣີຊາຍບາງຈໍາພວກໄດ້ຮຽກຮ້ອງໃຫ້ຍົກເລີກການປະກາດຂ່າວປະເສີດໂດຍເອົາວຽກງານເພີ້ມໃຫ້ເພື່ອບໍ່ໃຫ້ມີຄົນມາຟັງຂ່າວປະເສີດໄດ້.

4) ຊຶ່ງເຂົາໄດ້ເອົາຄວາມລອດພົ້ນໂດຍທາງພິທີຕັດມາເປັນຂໍ້ໂຕ້ແຍ່ງກັບການປະກາດຂ່າວປະເສີດແຫ່ງຄວາມລອດພົ້ນອັນແທ້ຈິງຂອງທ່ານໂປໂລ ແລະທ່ານບາຣະນາບາ.

5) ການແກ້ໄຂບັນຫາໃນໂບດທີ່ອີງຕາມຫລັກພຣະຄັມພີນັ້ນຜູ້ນໍາກັບເຖົ້າແກ່ຕ້ອງປະຊຸມປຶກສາຫາລືກັນ.

**ຄໍາເຫັນ:** ຄວາມສໍາຄັນຂອງໂບດຕ່າງ ໆ ຜູ້ນໍາຕ້ອງຮ່ວມກັນປ້ອງກັນ ແລະແກ້ໄຂການແຕກແຍກເປັນຢ່າງດີ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 15:1-2, 4-5

1. ແມ່ນຫຍັງເປັນການຕໍ່ສູ້ຂັດແຍ່ງກັນຢູ່ພາຍໃນໂບດ?
2. ທ່ານຄິດວ່າຜູ້ປະກາດພຣະທັມໂປໂລໄດ້ຜ່ານການຕໍ່ສູ້ເຮັດວຽກງານດ້ວຍຄວາມເຊື່ອຫລືບໍ່?
3. ທ່ານໂປໂລໄດ້ໃຫ້ເຫດຜົນຫຍັງແດ່ທີ່ເປັນອົງປະກອບການແກ້ໄຂການຂັດແຍ່ງເພື່ອຮັກສາຄວາມເຊື່ອໄວ້?
4. ທ່ານເຄີຍໄດ້ຄວບຄຸມອາຣົມຂອງທ່ານໃນເວລາທີ່ມີຜູ້ບໍ່ເຫັນດີກັບທ່ານຫລືບໍ່?
5. ບົດຮຽນນີ້ໄດ້ຊ່ວຍທ່ານໃຫ້ຮັບຮູ້ເຣື່ອງລາວແລ້ວທ່ານຈະຕັດສິດໃຈເຮັດວຽກການປະກາດນີ້ຕໍ່ໄປບໍ່?

**2. <u>ເອົາພຣະຄັມພີເປັນຫລັກ:</u>** (ກິຈການ 15:12-15)

1) ຂໍໃຫ້ອາສາສມັກອ່ານພຣະທັມ ກິຈການ 15:12-15

2) ຟັງຄໍາກ່າວຂອງທ່ານໂປໂລ ແລະທ່ານບາຣະນາບາແລ້ວມາສັງເກດເບິ່ງການປະສົບການຂອງເຂົາເຈົ້າວ່າພຣະເຈົ້າໄດ້ຊົງໃຫ້ການອັສຈັນຜ່ານທ່ານທັງສອງໃນຖ້າມກາງຄົນຕ່າງຊາດຢ່າງໃດ?

3) ພຣະຄັມພີຈະຊ່ວຍແກ້ໄຂການຂັດແຍ່ງ ການບໍ່ເຫັນດີເຫັນພ້ອມກັນໃນທຸກເຣື່ອງໄດ້.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 15:12-15

1. ໃນໂບດຂອງທ່ານມີຫຍັງແດ່ທີ່ຖືກກັບເຣື່ອງນີ້ທີ່ເອົາພຣະຄັມພີເປັນຫລັກໃນການ ປັບປຸງແກ້ໄຂ?
2. ທ່ານໄດ້ເຮັດຕາມແບບຢ່າງຄຣິສຕະຈັກເລີ້ມແຣກຢ່າງໃດແດ່?
3. ທ່ານຈະອູ້ມຊູຄຣິສຕຽນທີ່ໄດ້ຖືກໂຕ້ແຍ່ງດ້ວຍກັນໃຫ້ໄວ້ວາງໃຈໃນຫລັກການພຣະຄັມພີແນວໃດ?
4. ທ່ານໂປໂລເປັນຜູ້ນຶ່ງທີ່ພຣະເຈົ້າຊົງໃຊ້ໄປຊ່ວຍພວກຕ່າງຊາດໃຫ້ໄດ້ລອດພົ້ນຈາກບາບ, ທ່ານກໍໄປດ້ວຍຄວາມເຕັມໃຈ, ໃນນີ້ໄດ້ເວົ້າເຖິງທັສນະຄະຕິການເປັນຄຣິສຕຽນຂອງທ່ານໂປໂລວ່າຢ່າງໃດ?

**3. <u>ຮູ້ຈັກຄວາມຈິງ:</u>** ກິຈການ 15:23-29

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 15:23-29

2) **ອະທິບາຍ:** ຈຸດປະສົງຂອງຈົດໝາຍທີ່ຂຽນໄປຫາບັນດາຜູ້ທີ່ເຊື່ອຊາວຕ່າງຊາດເປັນຄໍາສເນີໃຫ້ເຂົາເຈົ້າໄດ້ຖືກປົດປ່ອຍອອກຈາກສິດທິການໂຄຣົບນັບຖືຄວາມລອດພົ້ນໂດຍການປະພຶດຕາມພວກຟາຣີຊາຍ.

3) ໃນຈົດໝາຍໄດ້ມີຂໍ້ຄວາມຫລາຍຢ່າງ ຊຶ່ງບໍ່ໄດ້ເວົ້າເຖິງຄວາມລອດພົ້ນ, ແຕ່ວ່າບາງບ່ອນກໍເວົ້າເຖິງການກໍາຈັດກິເລດໃຫ້ເພີ້ມການສາມັກຄີທັມກັນກັບບັນດາຜູ້ທີ່ເຊື່ອຄົນຢິວ ອັນນີ້ໄດ້ຊີ້ໃຫ້ເຫັນວ່າຄຣິສຕຽນເຂົ້າກັບຄົນ

ຊາດອື່ນ ໆ ໄດ້ ແລະຮ່ວມສາມັກຄີທັມຮ່ວມກັນ.

4) **ຄຳຖາມ:**

(1) ທ່ານໄດ້ຮຽນຮູ້ຄວາມສຳຄັນຂອງຄຣິສຕຽນຊາດອື່ນບໍ່?

(2) ຄົນອາເມຣິກາບາງຄົນບໍ່ຍອມຮັບ (ບໍ່ມັກ)ຄົນຊາດອື່ນແມ່ນຫລືບໍ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ກິຈການ 15:23-29

1. ເປັນດ້ວຍເຫດໃດຈຶ່ງມີການນະມັສການຫລາຍຮູບແບບແຕກຕ່າງກັນ?
2. ອັນໃດເປັນຂໍ້ຜູກມັດຜູ້ທີ່ເຊື່ອຢ່າງຈິງໃຈໃຫ້ເປັນນຶ່ງໃນພຣະເຢຊູຄຣິດ?
3. ແມ່ນຫຍັງທີ່ບອກເຖິງລັກສະນະເຊື້ອຊາດ, ຊົນເຜົ່າໃນຄຣິສຕະຈັກຂອງທ່ານ?
4. ທ່ານຈະເຮັດແນວໃດເພື່ອເສີມສ້າງສາຍສັມພັນກັບສະມາຊິກຜູ້ທີ່ຢູ່ຄົນລະຝ່າຍກັບທ່ານ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ບາງຄັ້ງຄຣິສຕຽນບໍ່ເຫັນພ້ອມກັບໃນເຣື່ອງການໄວ້ວາງໃຈໃນພຣະວິນຍານ, ແຕ່ເຂົາກໍຕ້ອງຍອມຮັບ ແລະໃຊ້ເວລາສົນທະນາກັນຂຶ້ນເພື່ອໃຫ້ມີການຕົກລົງເຫັນດີຮ່ວມກັນ ສະນັ້ນການປະກາດຂ່າວປະເສີດຈຶ່ງສາມາດດຳເນີນ ແລະຂຍາຍໄປໄດ້.
- ຄຣິສຕຽນຄວນເປີດປື້ມພຣະຄັມພີໃນເມື່ອມີການບໍ່ເຫັນພ້ອມກັນ ເພື່ອຈະສາມາດຕີຄວາມໝາຍທີ່ແຕກຕ່າງກັນໃຫ້ສອດຄ້ອງກັບຄວາມເຊື່ອໃນພຣະຄຳຂອງພຣະເຈົ້າ.
- ຄວາມລອດພົ້ນໂດຍທາງຄວາມເຊື່ອໃນພຣະຄຣິດເປັນຄວາມເຊື່ອຢ່າງຕາຍໃຈຂອງຄຣິສຕຽນ, ແຕ່ຍັງມີຄຣິສຕຽນບາງຄົນກຳລັງຝຶກຝົນພຍາຍາມຢູ່ ບາງເທື່ອກໍຕ້ອງໃຫ້ມີການສາມັກຄີທັມກັນຫລາຍຂຶ້ນ.

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org. by JH